# ຄະນະພົວພັນຕ່າງປະເທດສູນກາງພັກ

## Committee for External Relations of the Party Central Committee

**I.** ສະພາບການພົ້ນເດັ່ນຂອງບັນດາພັກການເມືອງໃນພາກພື້ນ ແລະ ສາກົນ..................................01 - 05
**II.** ການເຄື່ອນໄຫວຂອງ ຄະນະພົວພັນຕ່າງປະເທດສູນກາງພັກ.................................................06 - 07
**III.** ການເຄື່ອນໄຫວຂອງ ອົງການຈັດຕັ້ງມະຫາຊົນ ພາຍໃນ ຄຕພ..................................................08

ໃບຂ່າວຂອງຄະນະພົວພັນຕ່າງປະເທດສູນກາງພັກ
ເດືອນພຶດສະພາ 2026

ສຳນັກງານ ຕັ້ງຢູ່ ບ້ານ ສີວິໄລ, ເມືອງໄຊທານີ, ນະຄອນຫຼວງວຽງຈັນ
**Tel: 030 9876030, Email: Ri.dept.la@Gmail.com, Website: www.cerccp.org.la**

## I. ສະພາບການພົ້ນເດັ່ນຂອງບັນດາພັກການເມືອງໃນພາກພື້ນ ແລະ ສາກົນ

### 1. ສະພາບການພົ້ນເດັ່ນຂອງບັນດາພັກການເມືອງຕ່າງປະເທດ

#### 1) ພັກກອມມູນິດຫວຽດນາມ

ວັນທີ 12 ພຶດສະພາ 2026, ແນວໂຮມປະເທດຊາດຫວຽດນາມ ໄດ້ດຳເນີນກອງປະຊຸມໃຫຍ່ຜູ້ແທນແນວໂຮມທົ່ວປະເທດ ຄັ້ງທີ XI ສະໄໝ 2026-2031 ທີ່ຫໍປະຊຸມແຫ່ງຊາດ ພາຍໃຕ້ຫົວຂໍ້ "ຄວາມສາມັກຄີ-ປະຊາທິປະໄຕ-ນະວັດຕະກຳ-ແນວຄິດສ້າງສັນ-ການພັດທະນາ", ໂດຍການເຂົ້າຮ່ວມຂອງ ສະຫາຍ ໂຕ ເລິມ, ເລຂາທິການໃຫຍ່, ປະທານປະເທດ, ພ້ອມດ້ວຍ ສະຫາຍ ເລ ມິງ ຮຶງ, ນາຍົກລັດຖະມົນຕີ ແລະ ການນຳຂັ້ນສູງອື່ນໆ ມີຜູ້ແທນແນວໂຮມ 1,136 ສະຫາຍ ເຂົ້າຮ່ວມ. ກອງປະຊຸມໄດ້ເລືອກຕັ້ງເອົາ ຄະນະກຳມະການສູນກາງແນວໂຮມທັງໝົດ 397 ສະຫາຍ; ໃນນັ້ນແມ່ນ ສະຫາຍ ບາງ ບຸ່ຍ ຖິມິງຮວ່າຍ (Bui Thi Minh Hoai), ກຳມະການກົມການເມືອງປະທານຄະນະກຳມະການສູນກາງແນວໂຮມປະເທດຊາດຫວຽດນາມ ສະໄໝທີ X ໄດ້ຮັບເລືອກຕັ້ງໃຫ້ເປັນ ປະທານຄະນະກຳມະການສູນກາງແນວໂຮມປະເທດຊາດຫວຽດນາມ ສະໄໝທີ XI; ມີຮອງປະທານຄະນະກຳມະການສູນກາງແນວໂຮມ 08 ສະຫາຍ; ຄະນະປະທານຄະນະກຳມະການສູງການແນວໂຮມ ອີກ 70 ສະຫາຍ; 12 ສະຫາຍ ເປັນ ຄະນະປະຈຳຄະນະກຳມະການສູນກາງແນວໂຮມ. ໃນກອງປະຊຸມ, ສະຫາຍ ໂຕ ເລິມ ໄດ້ມີຄຳເຫັນຊີ້ນຳ ໂດຍໄດ້ວາງທິດທາງ 05 ກຸ່ມໜ້າວຽກຈຸດສຸມ ພ້ອມທັງເນັ້ນໜັກວ່າ: ຫຼັກການ "ຖືເອົາປະຊາຊົນເປັນກົກ" ຕ້ອງແມ່ນເຂັມທິດຊີ້ນຳທຸກການເຄື່ອນໄຫວຂອງແນວໂຮມ, ທຸກແນວທາງຂອງພັກ, ນະໂຍບາຍ ແລະ ກົດໝາຍຂອງລັດ, ລວມເຖິງທຸກແຜນງານ, ກິດຈະກຳ ແລະ ການເຄື່ອນໄຫວຕ່າງໆ ຂອງແນວໂຮມ ຕ້ອງມາຈາກ ຄວາມຕ້ອງການ, ຄວາມມຸ່ງມາດປາດຖະໜາ, ສິດ ແລະ ຜົນປະໂຫຍດອັນຊອບທຳ ຂອງປະຊາຊົນ ໂດຍມີເປົ້າໝາຍທີ່ຈະແຈ້ງຄື ການຍົກສູງມາດຖານຊີວິດການເປັນຢູ່ທາງດ້ານວັດຖຸ ແລະ ຈິດໃຈ ຂອງປະຊາຊົນໃຫ້ດີຂຶ້ນ. ແຕ່ລະກິດຈະກຳ, ຂະບວນການ ແລະ ການເຄື່ອນໄຫວ ຂອງແນວໂຮມຄວນຫັນປ່ຽນຈາກຮູບແບບກວມລວມ ໄປສູ່ການສ້າງໝາກຜົນທີ່ເປັນຮູບປະທຳ, ຈາກຄຳຂວັນໄປສູ່ຜົນຮັບທີ່ສາມາດວັດແທກໄດ້ ແລະ ຈາກຮູບການໄປສູ່ເນື້ອໃນທີ່ແທ້ຈິງ.

#### 2) ພັກກອມມູນິດກູບາ

ວັນທີ 09 ພຶດສະພາ 2026, ສ.ກູບາ ໄດ້ຫຼຸດຈຳນວນບັນດາກະຊວງ ຈາກ 27 ກະຊວງ ລົງເຫຼືອ 21 ກະຊວງ ເພື່ອຫຼຸດຂັ້ນຕອນການເຮັດວຽກທີ່ຊ້ຳຊ້ອນ ແລະ ເພີ່ມປະສິດທິພາບໃນການນຳໃຊ້ຊັບພະຍາກອນມະນຸດ ໃນການແກ້ໄຂບັນຫາໂຄງສ້າງທາງເສດຖະກິດ. ການປັບໂຄງສ້າງຄັ້ງນີ້ ມີຂຶ້ນທ່າມກາງ ສ.ອາເມຣິກາ ໄດ້ຍົກລະດັບມາດຕະການຂວ້ຳບາດຢ່າງຕໍ່ເນື່ອງ ໂດຍມີການປິດລ້ອມການສົ່ງອອກນ້ຳມັນໄປ ສ.ກູບາ ນັບແຕ່ວັນທີ 29 ມັງກອນ 2026 ເປັນຕົ້ນມາ, ເຮັດໃຫ້ເກີດການຂາດແຄນນ້ຳມັນເຊື້ອໄຟໃນທົ່ວປະເທດ. ຕໍ່ມາໃນວັນທີ 01 ພຶດສະພາ 2026 ກໍ່ໄດ້ນຳໃຊ້ມາດຕະການຂວ້ຳບາດຮອບໃໝ່ຕໍ່ບຸກຄົນ ແລະ ນິຕິບຸກຄົນຕ່າງປະເທດ ທີ່ດຳເນີນທຸລະກິດກັບ ສ.ກູບາ ໂດຍສະເພາະຂະແໜງພະລັງງານ, ຄວາມໝັ້ນຄົງ ແລະ ການເງິນ. ອາເມຣິກາ ຍັງສະເໜີໃຫ້ເງິນຊ່ວຍເຫຼືອດ້ານມະນຸດສະທຳແກ່ ສ.ກູບາ ຈຳນວນ 100 ລ້ານໂດລາສະຫະລັດ ເພື່ອແລກປ່ຽນກັບການປະຕິຮູບລະບອບການປົກຄອງຂອງກູບາ. ຖ້າຫາກ ກູບາຍອມຮັບເງື່ອນໄຂ, ເງິນຈຳນວນດັ່ງກ່າວ ຈະຖືກແຈກຢາຍຜ່ານທາງໂບດຄຣິດສ໌ຕຽນ ແລະ ອົງການຈັດຕັ້ງດ້ານມະນຸດສະທຳອິດສະຫຼະຕ່າງໆ ແທນທີ່ຈະຜ່ານທາງລັດຖະບານກູບາ. ເຖິງຢ່າງໃດກໍຕາມ, ກູບາ ໄດ້ສະແດງຈຸດຢືນວ່າ ບໍ່ມີສິ່ງໃດສາມາດປ່ຽນແປງການເມືອງຂອງຕົນໄດ້ ແລະ ກ່າວປະນາມການກະທຳດັ່ງກ່າວ ວ່າ ເປັນການລົງໂທດແບບລວມໝູ່ຕໍ່ປະຊາຊົນກູບາ ແລະ ກູບາ ບໍ່ສາມາດຍອມຮັບໄດ້.

#### 3) ພັກແຮງງານເກົາຫຼີ

ວັນທີ 10 ພຶດສະພາ 2026, ສະຫາຍ ກິມ ເຈິງ ອຸນ, ເລຂາທິການໃຫຍ່, ປະທານກິດຈະການແຫ່ງລັດແຫ່ງ ສປປ ເກົາຫຼີ ໄດ້ສົ່ງໂທລະເລກອວຍພອນ ເຖິງ ທ່ານ ວະລາດີເມຍ ປູຕິນ, ປະທານາທິບໍດີຣັດເຊຍ ເນື່ອງໃນໂອກາດສະເຫຼີມສະຫຼອງ ວັນໄຊຊະນະສົງຄາມປົກປ້ອງປິຕຸພູມຣັດເຊຍ ຄົບຮອບ 81 ປີ ໃນວັນທີ 09 ພຶດສະພາ 2026 ຜ່ານມາ. ເນື້ອໃນບາງຕອນລະບຸວ່າ ສປປ ເກົາຫຼີ ຍັງຢືນຢ່າງໜັກແໜ້ນ ຈະສືບຕໍ່ເສີມຂະຫຍາຍສາຍພົວພັນຮ່ວມມືກັບ ຣັດເຊຍ ໂດຍສະເພາະ ການຈັດຕັ້ງປະຕິບັດສົນທິສັນຍາ ວ່າດ້ວຍ ການເປັນຄູ່ຮ່ວມຍຸດທະສາດຮອບດ້ານ ທີ່ໄດ້ລົງນາມຮ່ວມກັນໃນປີ 2024. ໃນພິທີສະເຫຼີມສະຫຼອງດັ່ງກ່າວ, ສປປ ເກົາຫຼີ ກໍໄດ້ສົ່ງກ້ອນກຳລັງທະຫານ ເຂົ້າຮ່ວມເດີນສວນສະໜາມ ຊຶ່ງເປັນການສະແດງໃຫ້ເຫັນເຖິງການຮ່ວມມືທີ່ແໜ້ນແຟ້ນ ລະຫວ່າງ ສອງປະເທດ ໂດຍສະເພາະທາງດ້ານຄວາມໝັ້ນຄົງ ແລະ ການທະຫານ.

## 2. ພາກພື້ນອາຊີ-ປາຊີຟິກ ແລະ ອາຟຣິກາ

**ການພົວພັນລະຫວ່າງ ກຳປູເຈຍ-ໄທ:** ວັນທີ 05 ພຶດສະພາ 2026, ພາຍຫຼັງທີ່ ໄທ ໄດ້ປະກາດຍົກເລີກບົດບັນທຶກຄວາມເຂົ້າໃຈ ສະບັບເລກທີ 44 ຫຼື MOU 44 (ຝ່າຍກຳປູເຈຍ ເອີ້ນ MOU 2001) ກ່ຽວກັບການອ້າງກຳມະສິດທາງທະເລ ທີ່ເປັນເຂດທັບຊ້ອນ ລະຫວ່າງ ສອງປະເທດ, ກຳປູເຈຍ ໄດ້ສະແດງຄວາມຜິດຫວັງ ຕໍ່ການຕັດສິນໃຈດັ່ງກ່າວຂອງໄທ ເພາະເອກະສານດັ່ງກ່າວ ເປັນຂອບການຮ່ວມມືສອງຝ່າຍ ທີ່ຕົກລົງຮ່ວມກັນ ເພື່ອແກ້ໄຂຂໍ້ຂັດແຍ່ງທາງທະເລ ແລະ ຍັງສະທ້ອນໃຫ້ເຫັນເຖິງຈິດໃຈ ຂອງການຮ່ວມມື ແລະ ຄວາມຫວັງດີ ຮ່ວມກັນ ມາເປັນເວລາຫຼາຍກວ່າ 25 ປີ. ຕໍ່ກັບບັນຫາດັ່ງກ່າວ, ກຳປູເຈຍ ໄດ້ຕັດສິນໃຈນຳໃຊ້ຂະບວນການໄກ່ເກ່ຍພາກບັງຄັບພາຍໃຕ້ອະນຸສັນຍາ ສະຫະປະຊາຊາດ ວ່າດ້ວຍ ກົດໝາຍທາງທະເລ ຫຼື UNCLOS ເພື່ອຫາທາງອອກໂດຍສັນຕິວິທີ ບົນພື້ນຖານຂອງກົດໝາຍສາກົນໃນກໍລະນີມີຂໍ້ຂັດແຍ່ງທາງທະເລທັບຊ້ອນກັນ ລະຫວ່າງ ກຳປູເຈຍ ແລະ ໄທ.

**ການເມືອງຟີລິບປິນ:** ສະພາສູງ ໄດ້ເປີດການພິຈາລະນາຄະດີຂອງ ທ່ານ ນາງ ຊາຣາ ດູເຕີເຕ, ຮອງປະທານາທິບໍດີຟີລິບປິນ, ລູກສາວຂອງທ່ານ ໂຣດຣິໂກ ດູເຕີເຕ, ອະດີດປະທານາທິບໍດີຟີລິບປິນ ຖືກກ່າວຫາໃນຫຼາຍຂໍ້ກ່າວຫາ. ຖ້າຫາກສານສະພາສູງຕັດສິນວ່າ ມີຄວາມຜິດ, ທ່ານ ນາງ ຊາຣາ ຈະຖືກປົດອອກຈາກຕຳແໜ່ງຮອງປະທານາທິບໍດີ ແລະ ຖືກຫ້າມບໍ່ໃຫ້ດຳລົງທຸກຕຳແໜ່ງທາງການເມືອງຕະຫຼອດຊີວິດ ຊຶ່ງຈະເຮັດໃຫ້ແຜນການລົງສະໝັກເລືອກຕັ້ງປະທານາທິບໍດີ ປີ 2028 ຕ້ອງຢຸດສະງັກ. ເຖິງຢ່າງໃດກໍຕາມ, ກຸ່ມພັນທະມິດ ທີ່ຈົງຮັກພັກດີຕໍ່ຕະກຸນດູເຕີເຕ ໄດ້ຮ່ວມມືກັນຍຶດອຳນາດຈາກສະ ພາສູງ ແລະ ແຕ່ງຕັ້ງ ທ່ານ ອະລັນ ປີເຕີ ຄາເຍຕາໂນ, ຊຶ່ງເປັນຄົນສະໜິດຂອງ ທ່ານ ດູເຕີເຕ ຂຶ້ນເປັນປະທານສະພາສູງ ຄົນໃໝ່ ເພື່ອເຮັດໜ້າທີ່ໃນການພິຈາລະນາຄະດີດັ່ງກ່າວ. ທ່ານ ອະລັນ ໄດ້ກ່າວວ່າ ການພິຈາລະນາຄະດີຖອດຖອນ ທ່ານ ນາງ ຊາຣາ ໄດ້ເລີ່ມຂຶ້ນຢ່າງເປັນທາງການແລ້ວ ແລະ ໄດ້ໃຫ້ເວລາ 10 ວັນ ໃນການຍື່ນເອກະສານຕໍ່ສານເພື່ອຊີ້ແຈງຂໍ້ກ່າວຫາ. ກ່ອນໜ້ານີ້, ສະພາຕໍ່າ ຊຶ່ງສ່ວນໃຫຍ່ເປັນພັນທະມິດຂອງ ທ່ານ ເຟີດິນານ ມາກົອດ ຈູເນຍ, ປະທານາທິບໍດີ ຟີລິບປິນ ໄດ້ລົງມະຕິເຫັນດີໃຫ້ຖອດຖອນ ທ່ານ ນາງ ຊາຣາ ແລະ ໄດ້ສົ່ງເລື່ອງໃຫ້ໃຫ້ສະພາສູງເປັນຜູ້ຕັດສິນ.

**ການຢ້ຽມຢາມ ສປ ຈີນ ຢ່າງເປັນທາງການ ຂອງປະທານາທິບໍດີ ອາເມຣິກາ:** ໃນລະຫວ່າງວັນທີ 13-15 ພຶດສະພາ 2026 ທ່ານ ໂດນັນ ທຣໍາ ໄດ້ເດີນທາງຢ້ຽມຢາມ ສປ ຈີນ, ເທື່ອນີ້ເປັນຄັ້ງທີສອງ ນັບແຕ່ເປັນປະທານາທິບໍດີ ອາເມຣິກາຄັ້ງທຳອິດໃນປີ 2017; ເປັນເຫດການປະຫວັດສາດທີ່ສຳຄັນຂອງສອງປະເທດ ແລະ ສະພາບການລວມຂອງໂລກ ເນື່ອງຈາກ ທັງສອງປະເທດ ຕ່າງເປັນມະຫາອຳນາດຂອງໂລກ, ຊຶ່ງເກີດຂຶ້ນໃນທ່າມກາງສະພາບການໂລກມີຄວາມປັ່ນປ່ວນຍ້ອນຜົນກະທົບຈາກສົງຄາມ ລະຫວ່າງ ອາເມຣິກາ ແລະ ອີຣານ ໂດຍສະເພາະ ແມ່ນການຂາດແຄນນໍ້າມັນເຊື້ອໄຟ, ລາຄານໍ້າມັນ ທີ່ເພີ່ມສູງຂຶ້ນ ເປັນຜົນກະທົບແບບຕ່ອງໂສ້ ຕໍ່ສິນຄ້າບໍລິໂພກ-ອຸປະໂພກຂອງໂລກ. ການຢ້ຽມຢາມຄັ້ງນີ້, ມີຜູ້ແທນຂັ້ນສູງຂອງ ອາເມຣິກາຫຼາຍທ່ານ ຕິດຕາມໄປນຳ ເຊັ່ນ: ທ່ານ ມາກໂຄ້ ຣູບິໂອ້, ລັດຖະມົນຕີຕ່າງປະເທດ ອາເມຣິກາ ຊຶ່ງເປັນບຸກຄົນທີ່ ສປ ຈີນ ຂວໍ້າບາດກ່ອນໜ້ານີ້; ທ່ານ ພີດ ເຮັກເຊັດ, ລັດຖະມົນຕີກະຊວງປ້ອງກັນປະເທດ; ມີຜູ້ແທນດ້ານການຄ້າ ແລະ ຜູ້ແທນຂັ້ນສູງອີກຫຼາຍທ່ານ. ນອກຈາກນັ້ນ, ຍັງມີບັນດາປະທານບໍລິສັດຂະໜາດໃຫຍ່ 18 ແຫ່ງຂອງ ອາເມຣິກາ ຕິດຕາມໄປນຳ ເຊັ່ນ: ທ່ານ Tim Cook (Apple), ທ່ານ Elon Mask (Tesla/SpaceX), ທ່ານ Larry Fink (BlackRock), ທ່ານ Dina Powell (Meta) ແລະ ທ່ານອື່ນໆ ເພື່ອໄປຕົກລົງດ້ານການຄ້າ ກັບນັກທຸລະກິດຈີນ.

ການພົບປະກັນ ລະຫວ່າງ ສອງຜູ້ນຳ ຕາງຝ່າຍກໍໄດ້ແລກປ່ຽນຄຳຄິດເຫັນ ຢ່າງກົງໄປກົງມາ ເຊິ່ງການພົບປະດັ່ງກ່າວບໍ່ມີຖະແຫຼງການຮ່ວມຈາກທັງສອງຝ່າຍ, ມີພຽງການຕົກລົງບາງຢ່າງ ໃນວາລະການພົບປະສອງຝ່າຍ ດັ່ງນີ້: ເຫັນດີສ້າງການພົວພັນລະຫວ່າງສອງຝ່າຍທີ່ມີສະຖຽນລະພາບທາງຍຸດທະສາດ ບົນພື້ນຖານຄວາມຍຸຕິທຳ ແລະ ການແລກປ່ຽນເຊິ່ງກັນ ແລະ ກັນ; ເຫັນດີສ້າງຕັ້ງ 02 ສະຖາບັນໃໝ່ ເພື່ອເພີ່ມປະສິດທິພາບຂອງການພົວພັນດ້ານເສດຖະກິດ ຄື: ຄະນະກຳມະການການຄ້າ ອາເມຣິກາ-ຈີນ ແລະ ຄະນະກຳມະການການລົງທຶນ ອາເມຣິກາ-ຈີນ; ຈີນ ເຫັນດີຈະຂາຍບັນດາແຮ່ຫາຍາກ ໃຫ້ອາເມຣິກາຄືນໃໝ່, ໃນຂະນະທີ່ ອາເມຣິກາ ກໍຈະຂາຍ ຊິບ ຄືນໃຫ້ ຈີນ ຈາກທີ່ທັງສອງຝ່າຍ ຂວໍ້າບາດທາງການຄ້າຕໍ່ກັນ ຕັ້ງແຕ່ປີ 2025 ເປັນຕົ້ນມາ; ຈີນ ຈະຊື້ເຄື່ອງບິນ ໂບອິ້ງ ຈາກອາເມຣິກາ 200 ລຳ; ນອກຈາກນັ້ນ, ທ່ານ ສີ ຈິ້ນຜິງ ຈະໄປຢ້ຽມຢາມ ອາເມຣິກາ ໃນໂອກາດເຂົ້າຮ່ວມກອງປະຊຸມສຸດຍອດກຸ່ມ G20 ແລະ ກຸ່ມ APEC ໃນທ້າຍ

ປີ 2026 ນີ້. ການຢ້ຽມຢາມຄັ້ງນີ້ ປະສົບຜົນສໍາເລັດຢ່າງດີ, ເຮັດໃຫ້ສະພາບການໂດຍລວມຂອງໂລກ ຜ່ອນຄາຍລົງ ຈາກຄວາມເຄັ່ງຕຶງ ລະຫວ່າງ ອາເມຣິກາ ແລະ ອີຣານ ໂດຍ ອາເມຣິກາ ໄດ້ຍອມຮັບຂໍ້ສະເໜີຮອບໃໝ່ຂອງອີຣານ ທີ່ຈະລະງັບໂຄງການນິວເຄລຍຂອງຕົນ ໄລຍະ 20 ປີ ແທນການລະງັບຢ່າງຖາວອນ ຕາມການສະເໜີຂອງ ອາເມຣິກາ ໃນເບື້ອງຕົ້ນ ເຖິງວ່າ ອີກຫຼາຍເງື່ອນໄຂຂອງອີຣານ ຍັງບໍ່ທັນໄດ້ຮັບການເຫັນດີຈາກ ອາເມຣິກາກໍຕາມ. ນອກຈາກນັ້ນ, ລາຄານໍ້າມັນດິບ ທີ່ຈະຂົນສົ່ງໃນເດືອນກໍລະກົດ 2026 ກໍຫຼຸດລົງ 2,7% ເປັນ 109.9 ໂດລາ. ເຖິງແນວໃດກໍຕາມ, ນັກວິເຄາະ ໄດ້ຕີລາຄາວ່າ ການຢ້ຽມຢາມຄັ້ງນີ້ ແມ່ນຝ່າຍຈີນ ໄດ້ປຽບຫຼາຍກວ່າ ໂດຍສະເພາະດ້ານການເມືອງ ກໍຄືບົດບາດຂອງ ສປ ຈີນ ໃນເວທີພາກພື້ນ ແລະ ສາກົນ ທີ່ມີຫຼາຍປະເທດ ຢາກເພິ່ງພາຈີນ ໃນນັ້ນກໍແມ່ນ ອາເມຣິກາ ເພາະໃນການພົບປະຄັ້ງນີ້ ແມ່ນຝ່າຍອາເມຣິກາ ທີ່ເດີນທາງໄປຫາ ສປ ຈີນກ່ອນ. ແມ່ນແຕ່ຄວາມຂັດແຍ່ງ ລະຫວ່າງ ອາເມຣິກາ ກັບ ອີຣານ ກໍຍັງມີ ສປ ຈີນ ໄປກ່ຽວຂ້ອງ ແລະ ມີບົດບາດຢູ່ເບື້ອງຫຼັງຊຸກຍູ້ການເຈລະຈາຢຸດຍິງ ລະຫວ່າງ ອາເມຣິກາ ແລະ ອີຣານ ໃນໄລຍະເດືອນເມສາ 2026 ທີ່ຜ່ານມາ ທີ່ ປະເທດປາກິດສະຖານ.

**ສປ ຈີນ ຕ້ອນຮັບການຢ້ຽມຢາມຂອງ ປະທານາທິບໍດີ ຣັດເຊຍ**: ວັນທີ 20 ພຶດສະພາ 2026, ທີ່ນະຄອນຫຼວງປັກກິ່ງ, ສປ ຈີນ, ສະຫາຍ ສີ ຈິ້ນຜິງ, ປະທານປະເທດຈີນ ໄດ້ພົບປະກັບ ທ່ານ ວະລາດີເມຍ ປູຕິນ, ປະທານາທິບໍດີຣັດເຊຍ ມາຢ້ຽມຢາມລັດຖະກິດ ລະຫວ່າງວັນທີ 19-20 ພຶດສະພາ 2026. ໂອກາດນີ້, ປະມຸກລັດສອງປະເທດ ໄດ້ເຫັນດີເປັນເອກະພາບໃຫ້ຂະຫຍາຍເວລາການນໍາໃຊ້ "ສົນທິສັນຍາວ່າດ້ວຍ ບ້ານໃກ້ເຮືອນຄຽງທີ່ດີ ແລະ ການຮ່ວມມືມິດຕະພາບ ຈີນ-ຣັດເຊຍ". ສະຫາຍ ສີ ຈິ້ນຜິງ ຊີ້ໃຫ້ເຫັນວ່າ: ປີນີ້ແມ່ນປີສ້າງຕັ້ງສາຍພົວພັນຄູ່ຮ່ວມປະສານງານຍຸດທະສາດຮອບດ້ານລະຫວ່າງ ຈີນ-ຣັດເຊຍ ຄົບຮອບ 30 ປີ, ການເຊັນ "ສົນທິສັນຍາວ່າດ້ວຍບ້ານໃກ້ເຮືອນຄຽງທີ່ດີ ແລະ ການຮ່ວມມືມິດຕະພາບ ຈີນ-ຣັດເຊຍ" ຄົບຮອບ 25 ປີ. ໃນຖານະເປັນປະເທດສະມາຊິກສະພາຄວາມໝັ້ນຄົງອົງການສະຫະປະຊາຊາດ ແລະ ປະເທດໃຫຍ່ທີ່ສໍາຄັນຂອງໂລກ, ຈີນ ແລະ ຣັດເຊຍ ຄວນສຸມໃສ່ຍຸດທະສາດໄລຍະຍາວ, ຊຸກຍູ້ການພັດທະນາ ແລະ ຄວາມຈະເລີນຮຸ່ງເຮືອງຂອງກັນ ແລະ ກັນດ້ວຍການປະສານງານຍຸດທະສາດຮອບດ້ານ ລະຫວ່າງ ຈີນ-ຣັດເຊຍ ທີ່ມີຄຸນນະພາບສູງກວ່າເກົ່າ ເພື່ອຊຸກຍູ້ການສ້າງລະບົບບໍລິຫານທົ່ວໂລກທີ່ມີຄວາມຍຸຕິທໍາ ແລະ ສົມເຫດສົມຜົນກວ່າເກົ່າ. ສະຫາຍ ສີ ຈິ້ນຜິງ ເນັ້ນໜັກວ່າ: ສອງຝ່າຍ ຄວນເພີ່ມທະວີການວາງແຜນການຮ່ວມມືຄົບວົງຈອນ, ຊຸກຍູ້ໃຫ້ການຮ່ວມມືຕົວຈິງໃນຂົງເຂດເສດຖະກິດການຄ້າ, ການລົງທຶນ, ຊັບພະຍາກອນພະລັງງານ, ຄົມມະນາຄົມຂົນສົ່ງ ແລະ ການປະດິດສ້າງໃໝ່ດ້ານວິທະຍາສາດເຕັກໂນໂລຊີ ມີຄຸນນະພາບກວ່າເກົ່າ ແລະ ມີລະດັບສູງກວ່າເກົ່າ, ສ້າງພະລັງຂັບເຄື່ອນໃໝ່ດ້ວຍກໍາລັງການຜະລິດໃນຄຸນນະພາບໃໝ່. ຄວນລົງເລິກການປະສານງານຫຼາຍຝ່າຍ, ຮັດແໜ້ນການປະສານງານ ແລະ ການຮ່ວມມືໃນຂອບຫຼາຍຝ່າຍ ເຊັ່ນ: ອົງການສະຫະປະຊາຊາດ, ອົງການຮ່ວມມືຊຽງໄຮ້, ບຣິກສ ແລະ ອື່ນໆ, ຍຶດໝັ້ນປົກປ້ອງລະບຽບສາກົນຫຼັງສົງຄາມໂລກ ຄັ້ງທີ II ແລະ ອໍານາດຂອງກົດ ໝາຍສາກົນ, ສາມັກຄີກັບບັນດາປະເທດເຂດໂລກໃຕ້ ແລະ ນໍາພາການປະຕິຮູບລະບົບການບໍລິຫານທົ່ວໂລກກ້າວໄປສູ່ທິດທາງທີ່ຖືກຕ້ອງ. ທ່ານ ວະລາດີເມຍ ປູຕິນ ກ່າວວ່າ: ການຮ່ວມມືລະຫວ່າງ ຣັດເຊຍ-ຈີນ ແມ່ນປັດໄຈໝັ້ນທ່ຽງທີ່ສໍາຄັນສໍາລັບສະຖານະການສາກົນທີ່ປັ່ນປ່ວນວຸ່ນວາຍ. ຣັດເຊຍ ຍິນດີຮ່ວມກັບຈີນ ສືບຕໍ່ເພີ່ມທະວີການປະສານງານໃນຂອບຫຼາຍຝ່າຍ, ສະໜັບສະໜູນຈີນ ເປັນເຈົ້າພາບຈັດກອງປະຊຸມບໍ່ເປັນທາງການ ຂອງຜູ້ນໍາອົງການຮ່ວມມືເສດຖະກິດ ພາກພື້ນອາຊີ-ປາຊີຟິກ ຫຼື APEC, ປົກປ້ອງອໍານາດຂອງອົງການສະຫະປະຊາຊາດ, ສົ່ງເສີມຄວາມຫຼາກຫຼາຍດ້ານອະລິຍະທໍາ, ຊຸກຍູ້ໃຫ້ລະບຽບສາກົນມີຄວາມຍຸຕິທໍາ ແລະ ສະເໝີພາບກວ່າເກົ່າ. ປະມຸກລັດສອງປະເທດ ຍັງໄດ້ແລກປ່ຽນຄວາມເຫັນກ່ຽວກັບສະຖານະການໃນພາກພື້ນຕາເວັນອອກກາງ ລວມທັງບັນຫາສາກົນ ແລະ ພາກພື້ນທີ່ສໍາຄັນອື່ນໆ. ຫຼັງຈາກການພົບປະສອງຝ່າຍ ໄດ້ຮ່ວມກັນລົງນາມ "ຖະແຫຼງການຮ່ວມລະຫວ່າງ ສປ ຈີນ ແລະ ສະຫະພັນຣັດເຊຍ ກ່ຽວກັບ ການເພີ່ມທະວີການປະສານງານທາງຍຸດທະສາດຮອບດ້ານ ແລະ ລົງເລິກການຮ່ວມມືມິດຕະພາບຖານບ້ານໃກ້ເຮືອນຄຽງທີ່ດີ" ພ້ອມທັງເປັນສັກຂີພິຍານໃນການລົງນາມເອກະສານຮ່ວມມື 20 ສະບັບ ໃນຂົງເຂດເສດຖະກິດການຄ້າ, ການສຶກສາ ແລະ ວິທະຍາສາດເຕັກໂນໂລຊີ ລະຫວ່າງ ສອງຝ່າຍ. ໃນໄລຍະການຢ້ຽມຢາມ, ສອງຝ່າຍໄດ້ອອກ "ຖະແຫຼງການຮ່ວມລະຫວ່າງ ສປ ຈີນ ແລະ ສະຫະພັນຣັດເຊຍກ່ຽວກັບ ການສົ່ງເສີມການສ້າງໂລກທີ່ມີຫຼາຍຂົ້ວ ແລະ ການພົວພັນສາກົນແບບໃໝ່".

**ການເມືອງຍີ່ປຸ່ນ:** ວັນທີ 19 ພຶດສະພາ 2026, ຜູ້ສະໝັກເລືອກຕັ້ງ ທີ່ໄດ້ຮັບການສະໜັບສະໜູນຈາກ ພັກເສລີປະຊາທິປະໄຕ Liberal Democratic Party (ພັກລັດຖະບານ) ບໍ່ໄດ້ຮັບໄຊຊະນະໃນການເລືອກຕັ້ງທ້ອງຖິ່ນ ຈາກ 07 ໃນ 13 ເຂດການເລືອກຕັ້ງທົ່ວປະເທດ ແລະ ໃນການເລືອກຕັ້ງຜູ້ວ່າການລັດ ອິຊິກາວະ ໃນເດືອນມີນາ 2026 ທີ່ຜ່ານມານີ້, ທ່ານ Hiroshi Hase ຊຶ່ງເປັນຜູ້ດຳລົງຕຳແໜ່ງໃນປະຈຸບັນ ກໍ່ບໍ່ໄດ້ຮັບໄຊຊະນະໃນການເລືອກຕັ້ງ ເຖິງແມ່ນວ່າ ທ່ານ ນາງ ຊະນະເອະ ທະກະອິຊິ ຈະຊ່ວຍໂຄສະນາຫາສຽງໃຫ້ຜູ້ກ່ຽວກໍຕາມ. ຊຶ່ງການປະລາໄຊດັ່ງກ່າວ ເຮັດໃຫ້ພັກຝ່າຍຄ້ານ ມີຄວາມເຂັ້ມແຂງຂຶ້ນ ແລະ ພັກລັດຖະບານ ຕ້ອງໄດ້ຫາວິທີການສ້າງຄວາມນິຍົມໃນທ້ອງຖິ່ນຫຼາຍຂຶ້ນ. ຈາກການສຳຫຼວດພົບວ່າ ຄະແນນນິຍົມຂອງ ທ່ານ ນາງ ຊະນະເອະ ມີຄ່າສະເລ່ຍ 63% ໃນໄລຍະເວລາ 06 ເດືອນທຳອິດຂອງການດຳລົງຕຳແໜ່ງເປັນນາຍົກລັດຖະມົນຕີ, ຊຶ່ງເປັນຄະແນນນິຍົມສູງສຸດນັບຕັ້ງແຕ່ ທ່ານ ຊິນໂຊະ ອາເບະ ກັບມາຮັບຕຳແໜ່ງອີກຄັ້ງໃນປີ 2012. ໃນຂະນະດຽວກັນ, ຄະແນນນິຍົມຂອງພັກເສລີປະຊາທິປະໄຕ ຍັງສູງກວ່າທີ່ຜ່ານມາເຖິງ 30% ໃນຕະຫຼອດໄລຍະເວລາທີ່ ທ່ານ ນາງ ຊະນະເອະ ດຳລົງຕຳແໜ່ງເປັນນາຍົກລັດຖະມົນຕີ ໂດຍບໍ່ມີພັກການເມືອງໃດໄດ້ຄະແນນນິຍົມຫຼາຍກວ່າ 10% ນັບຕັ້ງແຕ່ມີການເລືອກຕັ້ງສຸກເສີນໃນເດືອນກຸມພາ 2026. ປັດຈຸບັນ ພັກລັດຖະບານ ພະຍາຍາມເຮັດໃຫ້ໄດ້ຮັບຄະແນນນິຍົມໃນທ້ອງຖິ່ນ ເພື່ອກະກຽມໃຫ້ແກ່ການເລືອກຕັ້ງທົ່ວໄປໃນປີໜ້າ.

**ກອງປະຊຸມສຸດຍອດ ລະຫວ່າງ ສ.ເກົາຫຼີ-ຍີ່ປຸ່ນ:** ໃນວັນທີ 19 ພຶດສະພາ 2026, ທີ່ເມືອງອັນດົງ, ສ.ເກົາຫຼີ, ເຊິ່ງສອງຝ່າຍ ໄດ້ເຫັນດີເປັນເອກະພາບທີ່ຈະຂະຫຍາຍຂອບການຮ່ວມມື ເຊິ່ງກັນ ແລະ ກັນ ໃນຫຼາຍດ້ານ ໂດຍສະເພາະແມ່ນການຈັດຫາພະລັງງານ ແລະ ຄວາມໝັ້ນຄົງທາງດ້ານເສດຖະກິດ ເຊັ່ນ: ການເກັບຮັກສາ ແລະ ສຳຮອງນໍ້າມັນເຊື້ອໄຟຮ່ວມກັນ, ການແລກປ່ຽນແກັສທຳມະຊາດ (LNG) ແລະ ຜະລິດຕະພັນປິໂຕຣລຽມ, ການຮ່ວມມື ດ້ານຄວາມໝັ້ນຄົງທາງດ້ານພະລັງງານຮ່ວມກັບບັນດາປະເທດພັນທະມິດ ໃນພາກພື້ນອາຊີ-ປາຊີຟິກ. ນອກຈາກນັ້ນ, ທັງສອງຝ່າຍ ຈະສືບຕໍ່ເພີ່ມທະວີ ແລະ ຮັດແໜ້ນການຮ່ວມມືທາງດ້ານຄວາມໝັ້ນຄົງກັບ ສ.ອາເມຣິກາ ເພື່ອຮັບປະກັນຕໍ່ກັບສິ່ງທ້າທາຍຕ່າງໆ ເຊັ່ນ: ການພັດທະນາອາວຸດນິວເຄຣຍຂອງ ສປປ ເກົາຫຼີ, ບັນຫາຊ່ອງແຄບໄຕ້ຫວັນ, ການແຂ່ງ ຂັນດ້ານຍຸດທະສາດ ລະຫວ່າງ ຈີນ-ອາເມຣິກາ, ຄວາມເຄັ່ງຕຶງຢູ່ ໃນພາກພື້ນອາຊີຕາເວັນອອກ, ນະໂຍບາຍອາເມຣິກາຕ້ອງມາກ່ອນຂອງ ທ່ານ ໂດນັນ ທຣຳ ແລະ ອື່ນໆ.

## 3. ພາກພື້ນເອີຣົບ-ອາເມຣິກາ

**ຄວາມຂັດແຍ່ງລະຫວ່າງ ອູແກຣນ-ຣັດເຊຍ:** ວັນທີ 04 ພຶດສະພາ 2026, ຣັດເຊຍ ໄດ້ປະກາດຢຸດຍິງ ລະຫວ່າງວັນທີ 08-09 ພຶດສະພາ 2026 ເນື່ອງໃນໂອກາດ ພິທີສະເຫຼີມສະຫຼອງ ວັນໄຊຊະນະສົງຄາມປ້ອງກັນປິຕຸພູມ ຄົບຮອບ 81 ປີ, ທີ່ ນະຄອນຫຼວງມົດສະກູ, ສ.ຣັດເຊຍ ແລະ ປະກາດວ່າໃຫ້ ອູແກຣນ ເຄົາລົບຕໍ່ຄຳຖະແຫຼງການດັ່ງກ່າວ ແລະ ປະຕິບັດການຢຸດຍິງເຊັ່ນກັນ. ພ້ອມກັນນັ້ນ, ກອງກຳລັງຂອງຣັດເຊຍ ໄດ້ນຳໃຊ້ທຸກມາດຕະການທີ່ຈຳເປັນ ເພື່ອຮັບປະກັນຄວາມປອດໄພ ໃນໄລຍະພິທີສະເຫຼີມສະຫຼອງວັນສຳຄັນທາງປະຫວັດສາດ. ເຖິງຢ່າງໃດກໍຕາມ, ອູແກຣນ ໄດ້ໂຈມຕີຣັດເຊຍ ໃນໄລຍະການສະເຫຼີມສະຫຼອງດັ່ງກ່າວ ໂດຍນຳໃຊ້ອາວຸດຫຼາຍຮູບແບບ ລວມທັງໝົດຫຼາຍກວ່າ 16,000 ຄັ້ງ, ໂດຍໄດ້ໂຈມຕີໃສ່ເຂດຊາຍແດນຂອງ ຣັດເຊຍ ດ້ວຍໂດຣນ, ລູກສອນໄຟ ແລະ ປືນໃຫຍ່ ໂດຍມີເປົ້າໝາຍໃສ່ແຫຼມ Crimea, ພ້ອມທັງເຂດ Belgorod, Kursk, Kaluga, Rostov ແລະ Krasnodar. ເຊິ່ງໂຈມຕີໂຮງງານຜະລິດເຊມິຄອນດັກເຕີສຳລັບການປ້ອງກັນປະເທດ ແລະ ໂຄງລ່າງພື້ນຖານດ້ານນໍ້າມັນເຊື້ອໄຟ ສ່ວນຣັດເຊຍ ໄດ້ຕອບໂຕ້ໂດຍການນຳໃຊ້ໂດຣນ 524 ລຳ ແລະ ຍິງລູກສອນໄຟ 22 ລູກ ໂຈມຕີໃສ່ເຂດ Odesa ແລະ Dnipro, ສ້າງຄວາມເສຍຫາຍໃຫ້ພື້ນທີ່ພົນລະເຮືອນ ແລະ ສິ່ງອຳນວຍຄວາມສະດວກດ້ານພະລັງງານ. ຂະນະທີ່ ເອີຣົບ ຍັງຢືນຢັນສະໜັບສະໜູນອູແກຣນ ທັງດ້ານການເມືອງ, ການທະຫານ ແລະ ມາດຕະການກົດດັນຕໍ່ ຣັດເຊຍ. ໃນວັນທີ 18 ພຶດສະພາ 2026, ເບລາຣຸດຊີ ແລະ ຣັດເຊຍ ໄດ້ເລີ່ມການຊ້ອມຮົບຮ່ວມກັນ ກ່ຽວກັບການປະຕິບັດການທາງນິວເຄຣຍຂະໜາດໃຫຍ່, ເປັນການຊ້ອມຮົບທາງນິວເຄຣຍຮ່ວມກັນຄັ້ງທຳອິດ ນັບຕັ້ງແຕ່ຣັດເຊຍ ໄດ້ນຳເອົາລະບົບລູກສອນໄຟໄຮເປີໂຊນິກ Oreshnik ມາປະຈຳການ ໃນເບລາຣຸດຊີ ຊຶ່ງອູແກຣນ ໄດ້ປະນາມການຝຶກຊ້ອມດັ່ງກ່າວ ແລະ ກ່າວຫາຣັດເຊຍ ວ່າເປັນໄພຂົ່ມຂູ່ ແລະ ເປັນການແຜ່ຂະຫຍາຍອາວຸດນິວເຄຣຍ ພ້ອມທັງຕັ້ງຂໍ້ສົງໄສວ່າ ຣັດເຊຍ ອາດໃຊ້ການຊ້ອມຮົບເຫຼົ່ານີ້ ເພື່ອປະສານງານການບຸກໂຈມຕີທາງພາກເໜືອຂອງອູແກຣນຮອບໃໝ່.

**ສ.ອາເມຣິກາ:** ໃນວັນທີ 01 ພຶດສະພາ 2026, ສ.ອາເມຣິກາ ຈະດຳເນີນການຖອນກຳລັງທະຫານປະຈຳການປະມານ 5,000 ຄົນ ຈາກທັງໝົດປະມານ 36,000 ຄົນ ອອກຈາກເຢຍລະມັນ, ແຕ່ ເຢຍລະມັນ ກ່າວວ່າ ການຕັດສິນ

ໃຈຂອງ ສ.ອາເມຣິກາ ເປັນສິ່ງທີ່ຄາດການໄດ້ຢູ່ແລ້ວ ແລະ ຢືນຢັນວ່າ ການຮ່ວມມືທາງທະຫານ ລະຫວ່າງ ສອງປະເທດ ຈະຍັງຄົງສືບຕໍ່ ແລະ ຍໍ້າວ່າ ການມີກອງທັບ ສ.ອາເມຣິກາ ໃນດິນແດນເຢຍລະມັນ ຍັງຄົງເປັນຜົນປະໂຫຍດຕໍ່ພວກເຮົາ ພ້ອມທັງຮຽກຮ້ອງໃຫ້ສະມາຊິກນາໂຕ້ ຮັບຜິດຊອບຫຼາຍຂຶ້ນ. ພ້ອມດຽວກັນນັ້ນ, ສ.ອາເມຣິກາ ຍັງອະນຸມັດຂໍ້ຕົກລົງດ້ານອາວຸດ ແລະ ການສະໜັບສະໜູນທາງການທະຫານຄັ້ງໃຫຍ່ ປະມານ 8.6 ຕື້ໂດລາສະຫະລັດ ສຳລັບ ກາຕາ, ກູເວດ, ເອເມຣັດ ອາຣັບ ແລະ ອິດສະຣາແອນ.

## 4.ພາກພື້ນຕາເວັນອອກກາງ

**ສະພາບຄວາມເຄັ່ງຕຶງໃນຕາເວັນອອກກາງ:** ສະຖານະການຍັງສືບຕໍ່ເຄັ່ງຮ້ອນໂດຍ ອີຣານ ໄດ້ໂຈມຕີເຮືອຮົບຂະໜາດກາງຂອງ ສ.ອາເມຣິກາ ໃນຊ່ອງແຄບຮໍມຸດສ໌ ຊຶ່ງ ສ.ອາເມຣິກາ ໄດ້ອອກມາປະຕິເສດຕໍ່ ເຫດການດັ່ງກ່າວ ແລະ ແຈ້ງວ່າ ສ.ອາເມຣິກາ ໄດ້ໂຈມຕີເຮືອຂະໜາດນ້ອຍຫຼາຍລຳຂອງ ອີຣານ ຂະນະກຳລັງຂັດຂວາງການຂົນສົ່ງສິນຄ້າທາງທະເລ. ສ່ວນທ່ານ ທຣຳ ໄດ້ອອກມາເຕືອນອີຣານ ວ່າ: ອີຣານ ຈະຖືກທຳລາຍລ້າງໄປຈາກໂລກ ຖ້າຫາກເຮືອຂອງ ສ. ອາເມຣິກາ ຖືກໂຈມຕີ ໃນຊ່ອງແຄບຮໍມຸດ ແລະ ໄດ້ປະກາດຍົກເລີກພາລະກິດປົກປ້ອງເສັ້ນທາງແລ່ນເຮືອໃນຊ່ອງແຄບດັ່ງກ່າວ ພ້ອມທັງຈະພິຈາລະນາ ແຜນ 14 ຂໍ້ ຂອງອີຣານ ຊຶ່ງລວມມີ: ການຮັບປະກັນວ່າຈະບໍ່ຮຸກຮານກັນ; ການຖອນທະຫານອອກຈາກບໍລິເວນໃກ້ຄຽງອີຣານ; ຍົກເລີກການປິດລ້ອມທາງທະເລຂອງ ສ. ອາເມຣິກາ; ຍົກເລີກການອາຍັດຊັບສິນຂອງອີຣານ; ຍົກເລີກມາດຕະການຂວ້ຳບາດ; ການຊົດເຊີຍຄ່າເສຍຫາຍຈາກສົງຄາມ; ການຢຸດຕິສົງຄາມໃນທຸກແນວຮົບ ລວມເຖິງໃນລີບັງ ແລະ ກົນໄກໃໝ່ສຳລັບຊ່ອງແຄບຮໍມຸດສ໌. ຕໍ່ມາໃນວັນທີ 06 ພຶດສະພາ 2026, ທ່ານ Abbas Araghchi, ລັດຖະມົນຕີຕ່າງປະເທດອີຣານ ໄດ້ຢ້ຽມຢາມ ສປ ຈີນ ແລະ ໄດ້ພົບປະກັບ ທ່ານ ຫວັງ ອີ້, ລັດຖະມົນຕີກະຊວງການຕ່າງ ປະເທດຈີນ ແລະ ໄດ້ແຈ້ງກ່ຽວກັບ ສະພາບການຫຼ້າສຸດໃນການເຈລະຈາ ລະຫວ່າງ ອີຣານ ແລະ ສ.ອາເມຣິກາ ວ່າ ບໍ່ສາມາດແກ້ໄຂດ້ວຍວິທີທາງການທະຫານ, ພ້ອມທັງຊົມເຊີຍຂໍ້ສະເໜີຂອງ ທ່ານ ສີ ຈິ້ນຜິງ ທີ່ສົ່ງເສີມສັນຕິພາບ ແລະ ສະຖຽນລະພາບໃນພາກພື້ນຕາເວັນອອກກາງ. ສ່ວນ ທ່ານ ຫວັງ ອີ້ ກ່າວວ່າ ສປ ຈີນ ສະໜັບສະໜູນການຢຸດຍິງທັນທີ ແລະ ສົ່ງເສີມການເຈລະຈາ ພ້ອມທັງສະໜັບສະໜູນອີຣານ ໃນການປົກປ້ອງອະທິປະໄຕ ຜ່ານການເຈລະຈາທາງການເມືອງ ແລະ ການທູດ ລວມທັງໃຫ້ບັນດາປະເທດມີສ່ວນຮ່ວມໃນການຟື້ນຟູເສັ້ນທາງແລ່ນເຮືອຜ່ານຊ່ອງແຄບຮໍມຸດສ໌ ໃຫ້ເປັນປົກກະຕິ. ທ່າມກາງສະຖານະການຄວາມເຄັ່ງຕຶງໃນຊ່ອງແຄບຮໍມຸດສ໌ ມີການໂຈມຕີເຮືອທີ່ແລ່ນຜ່ານ ເປັນໄລຍະ ແລະ ຍັງມີການປິດລ້ອມຊ່ອງທາງແລ່ນເຮືອທາງທະເລ ຂອງ ສ.ອາເມຣິກາ ຕໍ່ອີຣານ. ສະຖານະການດັ່ງກ່າວ ດຳເນີນໄປ ໃນຂະນະທີ່ຍັງມີການສືບຕໍ່ເຈລະຈາ ໂດຍຜ່ານປະເທດຜູ້ໄກ່ເກຍປາກິດສະຖານ ຊຶ່ງຕ່າງຝ່າຍຕ່າງປະຕິເສດຂໍ້ສະເໜີຂອງກັນ ແລະ ກັນ. ພ້ອມດຽວກັນນັ້ນ, ອີຣານ ແລະ ໂອມານ ກໍໄດ້ມີການປຶກສາຫາລື ກ່ຽວກັບກົນໄກການຮັບຮອງຄວາມປອດໄພໃນການເດີນເຮືອຜ່ານຊ່ອງແຄບຮໍມຸດສ໌. ຂະນະທີ່, ອິດສະຣາແອນ ແລະ ລີບັງ ໄດ້ຕົກລົງຂະຫຍາຍເວລາຢຸດຍິງອອກໄປອີກ 45 ວັນ ທ່າມກາງການລະເມີດຂໍ້ຕົກລົງຂອງອິດສະຣາແອນ ທີ່ຍັງດຳເນີນຢູ່ຢ່າງຕໍ່ເນື່ອງ ສ່ວນກຸ່ມຮິດສ໌ບານເລາະ ອ້າງວ່າໄດ້ຍິງໂຈມຕີໃສ່ກອງທັບອິດສະຣາແອນ ໃນຫຼາຍເປົ້າໝາຍ. ນອກຈາກນັ້ນ, ອິດສະຣາແອນ ຍັງຫັນກັບມາໂຈມຕີຫຼາຍພື້ນທີ່ໃນເຂດກາຊາ ແລະ ໄດ້ຍຶດເຮືອຈຳນວນໜຶ່ງຂອງຂະບວນເຮືອ Global Sumud Flotilla ຊຶ່ງເປັນເຮືອຊ່ວຍເຫຼືອດ້ານມະນຸດສະທຳ ທີ່ພະຍາຍາມຜ່າວົງປິດລ້ອມເຂົ້າໄປຍັງເຂດກາຊາ ໃນວັນທີ 18 ພຶດສະພາ 2026.

## II. ການເຄື່ອນໄຫວຂອງ ຄະນະພົວພັນຕ່າງປະເທດສູນກາງພັກ

### 1) ປະກາດການປັບປຸງກົງຈັກການຈັດຕັ້ງ ແລະ ແຕ່ງຕັ້ງຕຳແໜ່ງບໍລິຫານ ຂັ້ນຫົວໜ້າກົມຂອງ ຄຕພ



ໃນວັນທີ 05 ພຶດສະພາ 2026, ຄະນະພົວພັນຕ່າງປະເທດສູນກາງພັກ (ຄຕພ) ໄດ້ຈັດພິທີປະກາດການປັບປຸງກົງຈັກການຈັດຕັ້ງ ແລະ ຕຳແໜ່ງບໍລິຫານຂັ້ນຫົວໜ້າກົມ. ໂດຍການເປັນປະທານຂອງ ສະຫາຍ ບຸນເຫຼືອ ພັນດານຸວົງ, ກຳມະການສູນກາງພັກ, ເລຂາຄະນະພັກ, ຫົວໜ້າ ຄຕພ ແລະ ມີບັນດາສະຫາຍ ຄະນະນຳ ຄຕພ, ຜູ້ຕາງໜ້າຈາກກະຊວງການຕ່າງປະເທດ ແລະ ພະນັກງານ ຄຕພ ເຂົ້າຮ່ວມ.

ໃນພິທີ, ສະຫາຍຕາງໜ້າກົມຈັດຕັ້ງ-ພະນັກງານ ໄດ້ຜ່ານມະຕິຕົກລົງຂອງ ຄະນະເລຂາທິການສູນກາງພັກ ສະບັບເລກທີ 51/ຄລສພ, ລົງວັນທີ 31 ມີນາ 2026 ວ່າດ້ວຍການແຕ່ງຕັ້ງ ສະຫາຍ ບຸນຍະເດດ ໄຊຍະວົງ, ຫົວໜ້າຫ້ອງການ ຄະນະພົວພັນຕ່າງປະເທດສູນກາງພັກ ໄປຮັບໜ້າທີ່ໃໝ່ເປັນ ຫົວໜ້າກົມຄົ້ນຄວ້າ ແລະ ພົວພັນຫຼາຍຝ່າຍ; ມະຕິຕົກລົງ ສະບັບເລກທີ 52/ຄລສພ, ລົງວັນທີ 31 ມີນາ 2026 ວ່າດ້ວຍການແຕ່ງຕັ້ງ ສະຫາຍ ສິງຫານະຄອນ ສີຫາລາດ ເປັນ ຫົວໜ້າຫ້ອງການ ຄະນະພົວພັນຕ່າງປະເທດສູນກາງພັກ; ມະຕິຕົກລົງ ສະບັບເລກທີ 53/ຄລສພ, ລົງວັນທີ 31 ມີນາ 2026 ວ່າດ້ວຍການແຕ່ງຕັ້ງ ສະຫາຍ ວົງຄຳ ແສນສະທິດ ເປັນ ຫົວໜ້າກົມເອີຣົບ-ອາເມຣິກາ. ໃນພິທີ, ຍັງໄດ້ຜ່ານຂໍ້ຕົກລົງຂອງ ຫົວໜ້າຄະນະພົວພັນຕ່າງປະເທດສູນກາງພັກ ສະບັບເລກທີ 848/ຄຕພ.ຈພງ, ລົງວັນທີ 30 ເມສາ 2026 ວ່າດ້ວຍການແຕ່ງຕັ້ງ ສະຫາຍ ນາງ ສຸກສະຫວັນ ແກ້ວວິໄລວັນ ເປັນ ວ່າການຫົວໜ້າກົມຈັດຕັ້ງ-ພະນັກງານ. ໃນໂອກາດດຽວກັນ ຍັງໄດ້ມີການມອບ-ຮັບໜ້າທີ່ ລະຫວ່າງ ຫົວໜ້າຫ້ອງການ ຄຕພ ຜູ້ເກົ່າ ແລະ ຜູ້ໃໝ່.

ສະຫາຍ ບຸນເຫຼືອ ພັນດານຸວົງ, ກຳມະການສູນກາງພັກ, ເລຂາຄະນະພັກ, ຫົວໜ້າ ຄຕພ ໄດ້ສະແດງຄວາມຍ້ອງຍໍຊົມເຊີຍ ແລະ ຕີລາຄາສູງຕໍ່ບັນດາສະຫາຍທີ່ໄດ້ຮັບການແຕ່ງຕັ້ງ ເຊິ່ງໄດ້ຮັບຄວາມ ເຊື່ອໝັ້ນ ແລະ ໄວ້ວາງໃຈຈາກຂັ້ນເທິງ ກໍຄືພະນັກງານພາຍໃນ ຄຕພ, ທັງນີ້ ກໍເພື່ອແນໃສ່ເຮັດໃຫ້ວຽກງານຂອງ ຄຕພ ມີຄວາມໜັກແໜ້ນເຂັ້ມແຂງສາມາດຜັນຂະຫຍາຍແນວທາງຂອງພັກ-ລັດ ຕິດພັນກັບແຜນງານ-ໂຄງການ ຂອງ ຄຕພ ສະໄໝທີ III ໃຫ້ບັນລຸຜົນສຳເລັດຕາມຄາດໝາຍທີ່ໄດ້ວາງໄວ້, ບັນດາສະຫາຍທີ່ໄດ້ຮັບການແຕ່ງຕັ້ງ ຕ້ອງໄດ້ສືບຕໍ່ຍົກສູງຄວາມຮັບຜິດຊອບ ໃນການປະຕິບັດໜ້າທີ່ການເມືອງຂອງຕົນໃຫ້ສູງກວ່າເກົ່າ, ເປັນແບບຢ່າງປະຕິບັດໜ້າທີ່ວຽກງານຮອບດ້ານ ແລະ ເປັນແກນກາງຮັກສາຄວາມສາມັກຄີພາຍໃນ.

**2) ຫົວໜ້າຄະນະພົວພັນຕ່າງປະເທດສູນກາງພັກ ຕ້ອນຮັບການເຂົ້າຢ້ຽມຂໍ່ານັບຂອງ ເອກອັກຄະລັດຖະທູດ ຟີລິບປິນ ປະຈໍາ ສປປ ລາວ**




ວັນທີ 18 ພຶດສະພາ 2026, ທີ່ຄະນະພົວພັນຕ່າງປະເທດສູນກາງພັກ, ທ່ານ ບຸນເຫຼືອ ພັນດານຸວົງ, ກໍາມະການສູນກາງພັກ, ຫົວໜ້າຄະນະພົວພັນຕ່າງປະເທດສູນກາງພັກ ໄດ້ຕ້ອນຮັບການເຂົ້າຢ້ຽມຂໍ່ານັບ ຂອງ ທ່ານ ນາງ ອີລີສະເບດ ຕັນ ເຕ, ເອກອັກຄະລັດຖະທູດວິສາມັນຜູ້ມີອໍານາດເຕັມ ແຫ່ງ ສາທາລະນະລັດ ຟີລິບປິນ ປະຈໍາ ສປປ ລາວ ຄົນໃໝ່.

ໃນໂອກາດດັ່ງກ່າວ, ທ່ານ ບຸນເຫຼືອ ພັນດານຸວົງ ໄດ້ສະແດງຄວາມຍິນດີຕ້ອນຮັບ ແລະ ຊົມເຊີຍ ຕໍ່ ທ່ານເອກອັກຄະລັດຖະທູດ ທີ່ໄດ້ຮັບການແຕ່ງຕັ້ງໃຫ້ມາປະຕິບັດໜ້າທີ່ວຽກງານການທູດ ຢູ່ ສປປ ລາວ, ເຊື່ອໝັ້ນວ່າ ດ້ວຍບົດຮຽນ ແລະ ປະສົບການອັນອຸດົມສົມບູນຂອງ ທ່ານເອກອັກຄະລັດຖະທູດ ຈະສືບຕໍ່ຊຸກຍູ້ ສາຍພົວພັນມິດຕະພາບ ແລະ ການພົວພັນ ລະຫວ່າງ 2 ປະເທດ ລາວ-ຟີລິບປິນ ໃຫ້ໄດ້ຮັບການເສີມຂະຫຍາຍ ແລະ ມີບາດກ້າວໃໝ່, ຊົມເຊີຍ ຕໍ່ຜົນສໍາເລັດໃນການເປັນເຈົ້າພາບກອງປະຊຸມສຸດຍອດອາຊຽນ ຄັ້ງທີ 48 ຂອງຟີລິບປິນ. ພ້ອມນັ້ນ, ທ່ານ ບຸນເຫຼືອ ພັນດານຸວົງ ຍັງໄດ້ແຈ້ງໃຫ້ຊາບພາລະບົດບາດ ຂອງ ຄະນະພົວພັນຕ່າງປະເທດສູນກາງພັກ ແລະ ການພົວພັນດ້ານພັກ ຂອງລາວກັບພັກການເມືອງຕ່າງປະເທດໃນໂລກ ໃນປະຈຸບັນ.

ທ່ານເອກອັກຄະລັດຖະທູດ ໄດ້ສະແດງຄວາມຂອບໃຈ ເປັນຢ່າງສູງ ທີ່ໄດ້ມີໂອກາດເຂົ້າຢ້ຽມຂໍ່ານັບ ແລະ ຊົມເຊີຍ ຫົວໜ້າຄະນະພົວພັນຕ່າງປະເທດສູນກາງພັກ ທີ່ໄດ້ຮັບການເລືອກຕັ້ງເປັນ ກໍາມະການສູນກາງພັກ ໃນກອງປະຊຸມໃຫຍ່ຜູ້ແທນທົ່ວປະເທດ ຄັ້ງທີ XII ຂອງ ພັກ ປປ ລາວ ທີ່ຜ່ານມາ, ພ້ອມທັງຢືນຢັນ ແລະ ໃຫ້ຄໍາໝັ້ນສັນຍາຈະເຮັດສຸດຄວາມສາມາດຂອງຕົນ ໃນການເສີມຂະຫຍາຍສາຍພົວພັນມິດຕະພາບ ລະຫວ່າງ ຟີລິບປິນ-ລາວ ໃຫ້ນັບມື້ແຕກດອກອອກຜົນຍິ່ງໆຂຶ້ນ.

ສອງຝ່າຍໄດ້ຕີລາຄາສູງ ຕໍ່ສາຍພົວພັນມິດຕະພາບ ແລະ ການຮ່ວມມື ລາວ-ຟີລິບປິນ ໃນດ້ານຕ່າງໆ, ໂດຍສະເພາະ ການຮ່ວມມືດ້ານເສດຖະກິດ, ການຄ້າ, ການລົງທຶນ, ການສ້າງຊັບພະຍາກອນມະນຸດ, ການທ່ອງທ່ຽວ ແລະ ອື່ນໆ ພ້ອມທັງຍິນດີປະສານສົມທົບຢ່າງແໜ້ນແຟ້ນ ເພື່ອຮ່ວມກັນຊຸກຍູ້ເສີມຂະຫຍາຍສາຍພົວພັນດັ່ງກ່າວໃຫ້ງອກງາມຍິ່ງໆຂຶ້ນ ເພື່ອນໍາເອົາຜົນປະໂຫຍດຕົວຈິງມາສູ່ປະຊາຊົນ ສອງຊາດ ລາວ-ຟີລິບປິນ, ປະກອບສ່ວນເຂົ້າໃນພາລະກິດສັນຕິພາບ, ມິດຕະພາບ ແລະ ການຮ່ວມື ເພື່ອການພັດທະນາໃນພາກພື້ນ ແລະ ໃນໂລກ.

## III. ການເຄື່ອນໄຫວຂອງ ອົງການຈັດຕັ້ງມະຫາຊົນ ພາຍໃນ ຄຕພ

### 1. ຄະນະພົວພັນຕ່າງປະເທດສູນກາງພັກ ຈັດກອງປະຊຸມ ສຳມະນາວິທະຍາສາດ ພາຍໃຕ້ຫົວຂໍ້ "ສະພາບພາກພື້ນ ແລະ ສາກົນ, ວຽກງານການທູດເສດຖະກິດ ຂອງ ສປປ ລາວ ແລະ ສາຍພົວພັນ ລາວ-ຫວຽດນາມ ແລະ ລາວ-ຈີນ".




ໃນວັນທີ 28 ພຶດສະພາ 2026, ຄະນະພົວພັນຕ່າງປະເທດສູນກາງພັກ ໄດ້ຈັດກອງປະຊຸມສຳມະນາວິທະຍາສາດ ພາຍໃຕ້ຫົວຂໍ້: "ສະພາບການສາກົນໃນປັດຈຸບັນ, ວຽກງານການທູດເສດຖະກິດ ແລະ ສາຍພົວພັນລາວ-ຫວຽດນາມ ແລະ ລາວ-ຈີນ" ຂຶ້ນ, ເພື່ອເປັນການຂໍ່ານັບຮັບຕ້ອນ ແລະ ສະເຫຼີມສະຫຼອງວັນສຳຄັນທາງປະຫວັດສາດຂອງພັກ, ຂອງຊາດ ແລະ ວັນສ້າງຕັ້ງ ຄະນະພົວພັນຕ່າງປະເທດສູນກາງພັກ ຄົບຮອບ 43 ປີ, ພາຍໃຕ້ການເປັນປະທານຂອງ ສະຫາຍ ສິງຫານະຄອນ ສີຫາລາດ, ປະທານຄະນະບໍລິຫານງານກຳມະບານ ຄະນະພົວພັນຕ່າງປະເທດສູນກາງພັກ, ຫົວໜ້າຫ້ອງການ ຄຕພ ພ້ອມດ້ວຍອະດີດ ນັກການທູດ ຈາກສະໂມສອນນັກການທູດລາວ, ກະຊວງການຕ່າງປະເທດ, ພະນັກງານ-ສະມາຊິກ 3 ອົງການຈັດຕັ້ງມະຫາຊົນ ຂອງຄະນະພົວພັນຕ່າງປະເທດສູນກາງພັກ ເຂົ້າຮ່ວມຢ່າງພ້ອມພຽງ.

ຈຸດປະສົງໃນຄັ້ງນີ້ ເພື່ອພ້ອມກັນຄົ້ນຄວ້າ, ປຶກສາຫາລື ແລະ ແລກປ່ຽນ ກ່ຽວກັບສະພາບການສາກົນ ທີ່ມີການຜັນແປ ຢ່າງສະຫຼັບສັບຊ້ອນ, ຄາດຄະເນໄດ້ຍາກ ແລະ ສິ່ງທ້າທາຍຕ່າງໆ ເຊິ່ງຈະສົ່ງຜົນກະທົບຕໍ່ພາກພື້ນ ກໍ່ຄື ສປປ ລາວໃນຕໍ່ໜ້າ, ຍ້ອນແນວນັ້ນ ບັນດານັກວິທະຍາກອນ ໄດ້ຍົກສູງຄວາມຮັບຜິດຊອບການເມືອງ ຕາມຄຳຂວັນຄະນະພົວພັນຕ່າງປະເທດສູນກາງພັກຄື "ຄິດເລິກ ເບິ່ງໄກ ໄປຖືກ"; ວຽກງານຕ່າງປະເທດ ມີບົດບາດສຳຄັນໃນການເສີມຂະຫຍາຍສາຍພົວພັນ ລາວ-ຫວຽດນາມ ແລະ ລາວ-ຈີນ, ສ້າງທັດສະນະຫຼັກໝັ້ນ ຕາມແນວທາງການຕ່າງປະເທດຂອງພັກ, ຄວາມເຊື່ອໝັ້ນຕໍ່ການນຳພາຂອງພັກ ພ້ອມທັງໂຄສະນາຊຸກຍູ້ ການສ້າງເສດຖະກິດ-ສັງຄົມຂອງປະເທດເຮົາ.

ໃນກອງປະຊຸມ, ສະຫາຍ ຢົ້ງ ຈັນທະລັງສີ, ຮອງປະທານສະໂມສອນນັກການທູດ, ສະຖາບັນການຕ່າງປະເທດ ໄດ້ບັນຍາຍ ແລະ ແລກປ່ຽນໃນຫົວຂໍ້ "ສະພາບການສາກົນໃນປັດຈຸບັນ ແລະ ທ່າອ່ຽງໃນຕໍ່ໜ້າ - ກາລະໂອກາດ, ສິ່ງທ້າທາຍຕໍ່ພາກພື້ນ ແລະ ຕໍ່ ສປປ ລາວ", ຈາກນັ້ນ ສະຫາຍ ອາເລັກວິໄລ ສຸກຈະເລີນ,ຮອງຫົວໜ້າກົມອາຊີ ປາຊີຟິກ ແລະ ອາຟຣິກກາ, ຄະນະພົວພັນຕ່າງປະເທດສູນກາງພັກ ໄດ້ຂຶ້ນບັນຍາຍໃນຫົວຂໍ້ "ໝາກຜົນຂອງການພົວພັນຮ່ວມມືລາວ-ຫວຽດນາມ, ລາວ-ຈີນ" ແລະ ສະຫາຍ ນາງ ວິໄລລັກ ແສນດວງເດດ, ຮອງຫົວໜ້າກົມເສດຖະກິດ, ກະຊວງການຕ່າງປະເທດ ໄດ້ບັນຍາຍໃນຫົວຂໍ້ "ການທູດເສດຖະກິດ ຂອງ ສປປ ລາວ"; ຫຼັງຈາກນັ້ນ ຜູ້ເຂົ້າຮ່ວມກອງປະຊຸມ ໄດ້ແລກປ່ຽນຄຳຄິດຄຳເຫັນນຳກັນຢ່າງກວ້າງຂວາງ ເຊິ່ງເປັນການສ້າງຄວາມຮັບຮູ້ ແລະ ຄວາມເຂົ້າໃຈຢ່າງເລິກເຊິ່ງ ຜູ້ທີ່ໄດ້ເຂົ້າຮ່ວມ ກໍ່ຄື ສະມາຊິກພັກ-ພະນັກງານ ພາຍໃນ ຄະນະພົວພັນຕ່າງປະເທດສູນກາງພັກ.